# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 15 ມັງກອນ 2017 (1-15-2017)

## ຊົງສ້າງຂຶ້ນເພື່ອຈຸດປະສົງນຶ່ງ

*ວັດຖຸຊະນິດໃດມີຄ່າສູງທີ່ສຸດ ທີ່ທ່ານໄດ້ສຳຜັດມາ ?*

**ຈຸດສຳຄັນໃນບົດຮຽນ**: ກ່ອນທ່ານເກີດມາ, ພຣະເຈົ້າໄດ້ອອກແບບທ່ານດ້ວຍຄຸນຄ່າອັນລ້ຳເລີດ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ກຸ່ມຂອງພວກເຮົາໄດ້ດຳເນີນງານຄລີນິກການແພດແລະທຳການປ່າວປະກາດຕາມທ້ອງຖນົນ ໃນສະລຳເຂດຄົນຈົນແຫ່ງນຶ່ງນອກເມືອງ Rio De Janeiro, Brazil. ແຕ່ສະພາບການບໍ່ຄ່ອຍເອື້ອອຳນວຍ ຫລາຍວັນມີການຕໍ່ສູ້ຣະຫວ່າງຕຳຣວດ ແລະພວກແກ໊ງໃນສະລຳ ເຮັດໃຫ້ສະຖານະການເຄັ່ງຕຶງຂຶ້ນ, ແລະຄົນທີ່ພວກເຮົາມາຊ່ອຍກໍເກີດຄວາມຢ້ານກົວ ແລະບໍ່ກ້າອອກນອກເຮືອນຂອງພວກເຂົາ. ພວກເຮົາກໍເລີຍອຸທອນຕໍ່ຕຳຣວດ ເພື່ອຂໍອະນຸຍາດໃຫ້ພວກເຮົາດຳ ເນີນງານຂອງພວກເຮົາຕໍ່ ແລະຂນະດຽວກັນນັ້ນກໍຂໍຮ້ອງໃຫ້ຄຸ້ມກັນຄວາມປອດພັຍໃຫ້ພວກເຮົານຳ.

ຂ້າພະເຈົ້າຈະບໍ່ລືມຄຳຕອບຂອງບັນດາເຈົ້າໜ້າທີ່ຕຳຣວດເຫຼົ່ານັ້ນຕໍ່ຄຳຮ້ອງຂອງພວກເຮົາຈັກເທື່ອ. ເຈົ້າໜ້າທີ່ຕຳຣວດຜູ້ນຶ່ງຫົວເຍາະເຍີ້ຍວ່າ, "ເປັນຫຍັງຄົນຈຶ່ງຢາກມາຊ່ອຍພວກໝາໃນສະລຳນັ້ນ? "

ຫົວໃຈຂອງຂ້າພະເຈົ້າສະອື້ນຂຶ້ນຢ່າງແຮງໃນມື້ນັ້ນ. ພາຍນອກວັທນະທັມ ແລະສະພາບຂອງຂ້າພະເຈົ້າເອງ, ຂ້າພະເຈົ້າບໍ່ຮູ້ສຶກຫຍັງໝົດນອກຈາກຄວາມຮັກຕໍ່ຊາວບຣາຊີລຍາກຈົນເຫຼົ່ານັ້ນ. ແຕ່ວ່າມີຈັກຄັ້ງທີ່ຂ້າພະເຈົ້າຊຸກຊ້ອນການຈຳແນກຜີວພັນຕໍ່ຄົນບາງຄົນໃນຊາດຂອງຂ້າພະເຈົ້າເອງໄວ້ໃນໃຈ ທີ່ເຂົາເຈົ້າແຕກຕ່າງຈາກຂ້າພະເຈົ້າ?

ບາງທີ ສາເຫດທີ່ສະອື້ນສ່ວນໃຫຍ່ແມ່ນຍ້ອນໃຈຂອງຂ້າພະເຈົ້າສຳນຶກໄດ້ ທີ່ຮູ້ວ່າພຣະຄັມພີໄດ້ສອນໄວ້ວ່າຢ່າງໃດ. ພຣະເຈົ້າຮັກທຸກຄົນ ແລະພຣະອົງຊົງມີແຜນການ ແລະຈຸດປະສົງສະເພາະ ສຳລັບຊີວິດຂອງແຕ່ລະຄົນ.

**ພຣະຄັມພີກ່າວວ່າແນວໃດ?** ເຢເຣມີຢາ 1:4-10 (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

### ການສຶກສາພຣະຄັມພີ

**1. <u>ເຢເຣມີຢາ 1:4-5</u>** :

*4 ພຣະຜູ້ເຈົ້າເປັນເຈົ້າຊົງກ່າວຕໍ່ຂ້າພະເຈົ້າວ່າ: " 5 ກ່ອນເຮົາໄດ້ເຮັດໃຫ້ເຈົ້າເປັນຕົວຕົນຢູ່ໃນທ້ອງແມ່ ເຮົາໄດ້ເລືອກເຈົ້າໄວ້ແລ້ວກ່ອນເຈົ້າເກີດ ເຮົາໄດ້ແຕ່ງຕັ້ງເຈົ້າເປັນຜູ້ບໍຣິສຸດແລ້ວ ແລະ ເຮົາໄດ້ສະຖາປະນາໃຫ້ເຈົ້າເປັນຜູ້ປະກາດພຣະທັມແກ່ຄົນຕ່າງຊາດ.*

ຖານະຜູ້ທຳນວາຍ, ການຮັບໃຊ້ຂອງ ເຢເຣມີຢາ ຊີ່ວລະຍະສັ້ນໆ ຂອງປວັດສາດຊົນຊາດຢູດາ. ເຢເຣມີຢາຖືກຂນານນາມວ່າຜູ້ທຳນວາຍເຈົ້ານ້ຳຕາ ເພາະເພິ່ນໂສກເສົ້າຊ້ຳແລ້ວຊ້ຳເລົ່າ ນຳຄວາມບາບຂອງພີ່ນ້ອງຊົນຊາດອິສຣາເອນຂອງເພິ່ນ. ຮ້າຍໄປກວ່ານັ້ນແມ່ນ ເຢເຣມີຢາ ໄດ້ຮັບໃຊ້ໃນຍຸກທີ່ບາບີໂລນຄອບຄອງຢູດາ, ໃນຍຸກທີ່ພຣະວິຫານຖືກທຳລາຍ ແລະເພື່ອນຮ່ວມຊາດຂອງເພິ່ນຖືກຈັບໄປເປັນຊະເລີຍ.

ເຖິງແມ່ນຈະຕົກຢູ່ໃນສະພາບເຊັ່ນນັ້ນກໍຕາມ, ເຢເຣມີຢາຮູ້ແຜນການ ແລະພຣະປະສົງຂອງພຣະເຈົ້າສຳລັບຊີວິດເພິ່ນ:

- **"ກ່ອນເຮົາໄດ້ເຮັດໃຫ້ເຈົ້າເປັນຕົວຕົນໃນທ້ອງແມ່ເຮົາໄດ້ເລືອກເຈົ້າ."** ຄຳໃນພາສາເຮັບເຣີຄຳວ່າ "ໄດ້ເລືອກ" ຮັບຮູ້ຄວາມຄິດທີ່ວ່າຮູ້ຈັກກັບຜູ້ໃດຜູ້ໜຶ່ງ ແລະສ້າງຄວາມສຳພັນຂຶ້ນ. ພຣະເຈົ້າເຂົ້າຮ່ວມຢ່າງໃກ້ຊິດໃນວິຖີຊີວິດແລະຄວາມເຕີບໃຫຍ່ກ້າວໜ້າຂອງເຢຣມີຢາ.
- **"ເຮົາໄດ້ແຕ່ງຕັ້ງເຈົ້າໄວ້ກ່ອນເຈົ້າເກີດມາ."** ພຣະເຈົ້າໄດ້ຕັ້ງເຢເຣມີຢາໄວ້ເພື່ອພຣະປະສົງສະເພາະ ກ່ອນທີ່ຄົນອື່ນສາມາດເຫັນພຣະປະສົງນັ້ນດ້ວຍຊ້ຳ ຄືແຕ່ກ່ອນທີ່ເພິ່ນເກີດມາພຸ້ນ !
- **"ເຮົາໄດ້ສະຖາປານາເຈົ້າເປັນຜູ້ປະກາດແກ່ຄົນຕ່າງຊາດ."** ນານມາແລ້ວກ່ອນທີ່ເຢເຣມີຢາຮູ້ຈັກຈຸດປະສົງນີ້, ເພິ່ນໄດ້ຮັບມອບໝາຍໜ້າທີ່ສະເພາະຈາກພຣະເຈົ້າແລ້ວ. ແນ່ນອນສິ່ງນີ້ຈະເປັນສິ່ງກະຕຸ້ນເພິ່ນໃຫ້ມີຄວາມກ້າຫານໃນຍາມທີ່ເພິ່ນຖືກປະເຊີນກັບຄວາມທໍ້ຖອຍ ແລະຍາມທີ່ຖືກຂົ່ມເຫັງ.

ຮ້າຍກວ່າຍຸກໃດໆ, ໂລກຕ້ອງເຂົ້າໃຈວ່າ ພຣະເຈົ້າມີແຜນການສຳລັບຊີວິດຂອງມະນຸດແຕ່ລະຄົນ ພຣະອົງຊົງມີແຜນການສຳລັບຜູ້ທີ່ບໍ່ໄດ້ເກີດມາພ້ອມ ພຣະອົງຊົງມີແຜນການສຳລັບຜູ້ຊະລາອີກດ້ວຍ. ພຣະອົງຊົງມີພຣະປະສົງສຳລັບຜູ້ທີ່ມີຄວາມຕ້ອງການທາງດ້ານຮ່າງກາຍ ແລະ ສມອງພ້ອມ. ພຣະອົງ ຍັງມີພຣະປະສົງສຳລັບຄົນຈຳພວກທີ່ບໍ່ສາມາດເຮັດຫຍັງໄດ້ຖ້າປາສຈາກການຊ່ວຍເຫຼືອຈາກຄົນອື່ນ. ບໍ່ມີມະນຸດຄົນໃດມີຄ່າຕໍ່າກວ່າໝູ່ສຳລັບພຣະເຈົ້າ ເພາະຂນາດ ຫລືຄວາມສາມາດ ຫລືເຊື້ອຊາດ ຫລືອາຍຸ.

ພໍ່ແມ່ຂອງຂ້າພະເຈົ້າຮູ້ຈັກຂ້າພະເຈົ້າເປັນເວລາເກົ້າເດືອນກ່ອນທີ່ຂ້າພະເຈົ້າເກີດມາ, ແຕ່ພຣະເຈົ້າຮູ້ຈັກຂ້າພະເຈົ້າຫຼາຍພັນປີກ່ອນຂ້າພະເຈົ້າຈະປາກົດມີຕົວຕົນຂຶ້ນມາ. ພຣະເຈົ້າຄົງໄດ້ຮັບຄວາມຍິນດີແນ່ນອນໃນເວລາທີ່ຂ້າພະເຈົ້າເກີດມາ ການຊົງສ້າງຂອງພຣະອົງບໍ່ມີຫຍັງປິດບັງໄວ້ໄດ້. ພຣະອົງກໍຮູ້ສຶກກ່ຽວກັບຕົວທ່ານແບບດຽວກັນນີ້ !

ພຣະເຈົ້າຮູ້ຈັກທ່ານດີນກວ່າ, ແລະຮູ້ຈັກດີກວ່າຄົນອື່ນໃດທັງສິ້ນ. ພຣະອົງຮັກທ່ານເກີນກວ່າທ່ານເຂົ້າໃຈອີກ, ແລະພຣະອົງມີແຜນການຢ່າງອັສຈັນສຳລັບຊີວິດທ່ານ.

| |
|---|
| *ແມ່ນຫຍັງເຮັດໃຫ້ເຮົາມີຄ່າໃນຖານະທີ່ເຮົາເປັນມະນຸດ ?* |

## 2. <u>ເຢເຣມີຢາ 1:6-8</u> :

*6 ແລ້ວຂ້າພະເຈົ້າໄດ້ທູນຕອບວ່າ "ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍບໍ່ຮູ້ວ່າຈະເວົ້າຢ່າງໃດເພາະວ່າຂ້ານ້ອຍຍັງນ້ອຍ".*
*7 ແຕ່ພຣະຜູ້ເປັນເຈົ້າຊົງບອກຂ້າພະເຈົ້າວ່າ: "ຢ່າເວົ້າວ່າເຈົ້າຍັງນ້ອຍເພາະວ່າເຮົາຈະໃຊ້ເຈົ້າໄປຫາປະຊາຊົນ ແລ້ວຈົ່ງບອກທຸກສິ່ງທີ່ເຮົາຈະສັ່ງເຈົ້າໃຫ້ແກ່ພວກເຂົາ ເຈົ້າຢ່າຊູ່ຢ້ານຄົນເຫຼົ່ານັ້ນ ເພາະວ່າເຮົາຈະຢູ່ປົກປັກຮັກສາເຈົ້າ."*

ບາງເທື່ອ ແຜນການສະເພາະຂອງພຣະເຈົ້າ ສຳລັບຊີວິດເຮົາກໍແຈ່ມແຈ້ງ, ຄືກັນກັບແຜນການສຳລັບເຢເຣມີຢາ. ເຖິງແມ່ນ ເມື່ອໃດເຮົາບໍ່ມີຄວາມແນ່ໃຈຕໍ່ເສັ້ນທາງຂອງເຮົາກໍຕາມ, ພວກເຮົາຍັງວາງໃຈວ່າ ພຣະເຈົ້າຍັງມີແຜນການສຳລັບເຮົາ. ພຣະອົງເປີດແຜນການຂອງພຣະອົງຢ່າງໃດ?

- **ເຮົາຈະພົບແຜນການຂອງພຣະເຈົ້າເມື່ອເຮົາສແວງຫາພຣະອົງ.** ທຸກສິ່ງເລີ່ມຕົ້ນຈາກການມີຄວາມສຳພັນກັບພຣະເຈົ້າ. ພຣະອົງບໍ່ໄດ້ລີ້ຈາກພວກເຮົາ. ພຣະອົງຊົງມີຄວາມປະສົງຢ່າງແຮງກ້າຢາກໃຫ້ເຮົາຮູ້ແຜນການທີ່ພຣະອົງມີສຳລັບຊີວິດເຮົາ:*"ພຣະອົງຊົງຢູ່ໃກ້ທຸກຄົນທີ່ຮ້ອງຫາພຣະອົງ ທັງຜູ້ທີ່ຮ້ອງຫາພຣະອົງດ້ວຍໃຈຈິງ" (ພສສ 145:18).*
- **ເຮົາຈະພົບແຜນການຂອງພຣະເຈົ້າເມື່ອເຮົາຕິດຕາມພຣະທັມພຣະອົງ.** ມີຫລາຍສິ່ງທີ່ພຣະອົງຢາກໃຫ້ເຮົາເຮັດໄດ້ຖືກເປີດເຜີຍໃນພຣະທັມຂອງພຣະອົງຮຽບຮ້ອຍແລ້ວ. ນໍ້າພຣະທັຍຂອງພຣະເຈົ້າ ກ່ຽວກັບບຸຄລິກຂອງເຮົາ

ແຈ່ມແຈ້ງ ແລະຊັດເຈນ, ແລະພຣະຄັມພີຊົງນຳພາເຮົາວ່າເຮົາຄວນດຳຣົງຊີວິດຢ່າງໃດ:ເວລາເຮົາຕິດຕາມພຣະຄຣິດແລະ ຄວບຄຸມການປະພຶດ, ຄຸນທັມ, ສິນທັມ ຖືກຕ້ອງຕາມຄວາມຊອບທັມຂອງພຣະເຈົ້າ ເປີດເຜີຍແລ້ວ, ໃນພຣະທັມຂອງພຣະອົງ, ລາຍລະອຽດສະເພາະ ຂອງແຜນການສະເພາະຂອງພຣະເຈົ້າຈະຕົກລົງໃສ່ບ່ອນນັ້ນ.

ໜ້າເສັ້ງດາຍ, ທັນທີທີ່ເຮົາເຫັນພາບທີ່ພຣະເຈົ້າຢາກໃຫ້ເຮົາເຮັດແຈ່ມແຈ້ງຂຶ້ນຍາມໃດ, "ຈັກແກ້ຕົວ" " excuse machine" ກໍຮ້ອງແຜດສຽງໂຜ່ຂຶ້ນມາໃນສມອງຂອງເຮົາສເມີ. ພວກເຮົາພົບເຫດຜົນ ຮ້ອຍອັນພັນແນວ ແກ້ຕົວວ່າເປັນຫຍັງເຮົາຈຶ່ງເຮັດບໍ່ໄດ້ໃນສິ່ງທີ່ພຣະເຈົ້າຢາກໃຫ້ເຮັດ.

ສິ່ງນີ້ໄດ້ເກີດກັບ ເຢເຣມີຢາ ໃນຂໍ້ 6. ເພິ່ນຕອບໂຕ້ກັບແຜນການຂອງພຣະເຈົ້າດ້ວຍຂໍ້ແກ້ຕົວສອງຢ່າງ:

- **"ຂ້ານ້ອຍບໍ່ຮູ້ເວົ້າ."** ເຢເຣມີຢາ ຂາດປະສົບການ ທັງຖານະຜູ້ນຳ ແລະຜູ້ທຳນວາຍ.
- **"ຂ້ານ້ອຍຍັງນ້ອຍ."** ພາສາເຮັບເຣີ ຄຳວ່າ "ນ້ອຍ" ກວມລວມອາຍຸຫລາຍລຸ້ນ, ນັບແຕ່ເດັກເກີດໃໝ່ຮອດຊາຍໜຸ່ມອາຍຸ 20 ປີ. ເຢເຣມີຢາເປັນຊາຍໜຸ່ມໃນຊຸມຊົນນັ້ນ.

ບໍ່ແປກດອກ, ພຣະເຈົ້າບໍ່ຍອມຮັບການແກ້ຕົວເຫຼົ່ານີ້. ພຣະເຈົ້າຮູ້ວ່າພຣະອົງສາມາດກະທຳຜ່ານເຢເຣມີຢາ; ເພາະສະນັ້ນ ອົງພຣະຜູ້ເປັນເຈົ້າພຽງແຕ່ທວນຄືນພັນທະກິດຂອງພຣະອົງໃຫ້ແກ່ຜູ້ຮັບໃຊ້ຂອງພຣະອົງເທົ່ານັ້ນ.

ພຣະເຈົ້າໃຫ້ກຳລັງໃຈເຢເຣມີຢາວ່າ "ບໍ່ຕ້ອງຢ້ານຜູ້ໃດ." ການຮູ້ວ່າພຣະເຈົ້າໄດ້ເອີ້ນເພິ່ນສຳລັບພຣະປະສົງສະເພາະນັ້ນ ເຮັດໃຫ້ຄວາມຢ້ານຂອງເຢເຣມີຢາລົດລົງແດ່, ແຕ່ພຣະເຈົ້າປະທານສິ່ງທີ່ຍິ່ງໃຫຍ່ກວ່ານັ້ນ ຄື: ການສະຖິດຢູ່ນຳຂອງພຣະອົງເອງ. "ເຮົາຈະຢູ່ປົກປັກຮັກສາເຈົ້າ."

ເຊັ່ນດຽວກັນ ພຣະເຈົ້າຊົງຢູ່ກັບເຮົາໃນຂນະທີ່ເຮົານຳເອົາພຣະປະສົງຂອງພຣະອົງອອກໄປປະຕິບັດ. ພຣະເຢຊູຊົງໄດ້ໃຫ້ສັນຍາແລ້ວວ່າ ພຣະບິດາຈະສົ່ງ "ທີ່ປຶກສາ, ພຣະວິນຍານບໍຣິສຸດ" (ຢຮ 14:26) ເພື່ອຊ່ອຍເຮົາ. ພຣະວິນຍານບໍຣິສຸດອົງນີ້ແມ່ນຣິດອຳນາດດຽວກັນກັບອຳນາດທີ່ຊົງບັນດານໃຫ້ພຣະເຢຊູເປັນຄືນມາຈາກຕາຍ (ເບິ່ງ ໂຣມ 8:11) ຊົງສະຖິດຢູ່ໃນເຮົາ.

| |
|---|
| ***ມີຄຳແກ້ຕົວໃດແດ່ທີ່ພວກເຮົາມັກໃຊ້ເພື່ອຫຼີກລ້ຽງສິ່ງທີ່ພຣະເຈົ້າເອີ້ນເຮົາໃຫ້ເຮັດ?*** |

## 3. <u>ເຢເຣມີຢາ 1:9-10</u> :

*9 ຄັນແລ້ວພຣະຜູ້ເປັນເຈົ້າໄດ້ຊົງເດ່ພຣະຫັດມາໃສ່ປາກຂ້າພະເຈົ້າ ແລະຊົງກ່າວຕໍ່ຂ້າພະເຈົ້າວ່າ: "ເບິ່ງດູ ເຮົາໄດ້ເອົາຄຳເວົ້າຂອງເຮົາໃສ່ໃນປາກຂອງເຈົ້າແລ້ວ 10 ມື້ນີ້ ເຮົາໃຫ້ເຈົ້າມີອຳນາດເໜືອປະຊາຊາດ ແລະຣາຊາອານາຈັກທັງຫຼາຍເພື່ອຖອນຮາກ ແລະຮື້ຖິ້ມເສັ້ຽເພື່ອທຳລາຍ ແລະເຮັດໃຫ້ລົ້ມລົງເພື່ອກໍ່ຂຶ້ນ ແລະປູກຝັງໄວ້.*

ພຣະເຈົ້າມີຈຸດພິເສດ ແລະວິເສດໃນການສ້າງພວກເຮົາແຕ່ລະຄົນ ແລະພຣະເຈົ້າບໍ່ມີຄວາມຜິດພາດ. ພຣະອົງໃຊ້ເວລາມາກມາຍເພື່ອປັ້ນແຕ່ງທ່ານ ແລະຂ້າພະເຈົ້າ ຕາມຮູບແບບທີ່ພຣະອົງຢາກໃຫ້ເຮົາເປັນ. ມີສິ່ງໃດຍາກເຂັນແລະຂີດຄວາມຈຳກັດທີ່ຄິດວ່າເຮົາມີ, ພຣະເຈົ້າອອກແບບ ແລະຈັດຕຽມສິ່ງຈຳເປັນໄວ້ໃຫ້ເຮົາເພື່ອນຳກຽດມາສູ່ພຣະອົງ.

ເຢເຣມີຢາ ມອງເຫັນຕົວເພິ່ນວ່າເປັນຄົນທີ່ມີຄວາມສາມາດຈຳກັດ: ເພິ່ນຍັງນ້ອຍ ແລະເວົ້າບໍ່ເປັນ. ແຕ່ພຣະເຈົ້າຮູ້ດີກວ່າ: " ອົງພຣະຜູ້ເປັນເຈົ້າໄດ້ຊົງເດ່ພຣະຫັດມາໃສ່ປາກຂ້າພະເຈົ້າ." ພຣະເຈົ້າເລືອກ ເຢເຣມີຢາ ເປັນຜູ້ທຳນວາຍຂອງພຣະອົງ, ແລະພຣະອົງໄດ້ຈັດຕຽມທັງຄຳເວົ້າທີ່ເພິ່ນຕ້ອງການ ແລະຄວາມສາມາດເວົ້າຖ້ອຍຄຳເຫຼົ່ານັ້ນໃຫ້ແລ້ວ.

ພຣະເຈົ້າໄດ້ຈັດຕຽມໃຫ້ເຮົາແຕ່ລະຄົນ ເມື່ອພຣະອົງຊົງເລືອກເຮົາ. ພວກເຮົາບາງຄົນປາຖນາຢາກເວົ້າດີຄືກັນກັບ

ເຢເຣມີຢາ. ບາງຄົນປາຖນາຢາກເປັນຜູ້ນຳເກັ່ງຄືໂມເຊ. ຫຼືຂຽນເກັ່ງດັ່ງ ດາວິດ. ຫຼືເຮັດສິ່ງນີ້ ສິ່ງນັ້ນ ເຊັ່ນວ່ານີ້ໆນັ້ນໆ. ແຕ່ໂລກຕ້ອງການພຽງແຕ່ເຢເຣມີຢາຜູ້ດຽວ, ໂມເຊຜູ້ດຽວ, ແລະດາວິດຜູ້ດຽວເທົ່ານັ້ນ. (ເຮົາບໍ່ຈຳເປັນຕ້ອງຄືຜູ້ໃດ).

ຈົ່ງຈຳໄວ້ວ່າ: ພຣະເຈົ້າປະທານເຢເຣມີຢາ ພຽງຜູ້ດຽວແກ່ໂລກ. ແລະພຣະອົງປະທານທ່ານພຽງຜູ້ດຽວແກ່ໂລກ! ດັ່ງດຽວກັນກັບພຣະເຈົ້າໄດ້ຊົງເອີ້ນເຢເຣມີຢາ ໃນທາງນຶ່ງສະເພາະ, ພຣະອົງຈັດຕຽມໃຫ້ເຢເຣມີຢາ ໃນທາງນຶ່ງສະເພາະ. ພຣະເຈົ້າຊົງທຳງານແບບດຽວກັນໃນທຸກວັນນີ້: ຊົງປະທານໃຫ້ເຮົາແຕ່ລະຄົນທາງນຶ່ງສະເພາະ ແລະບ່ອນຮັບໃຊ້ ແລະຖວາຍກຽດແດ່ພຣະອົງໃນຣາຊອານາຈັກຂອງພຣະເຈົ້າ. ພຣະອົງຈະໃຊ້ທ່ານ ແລະຂ້າພຣະເຈົ້າເພື່ອຈຸດປະສົງ ແລະແຜນການສະເພາະ. ສິ່ງທີ່ພຣະອົງໄດ້ຊົງອອກແບບ ແລະໄດ້ຣະບຸໄວ້ສຳລັບທ່ານ ແລະຂ້າພະເຈົ້າເທົ່ານັ້ນເພື່ອໃຫ້ສຳເຣັດ. ພວກເຮົາຈະດຳຣົງຊີວິດຕາມພຣະປະສົງ ແລະສຳເຣັດຜົນຍິ່ງຂຶ້ນເວລາເຮົາຫຼີກເວັ້ນການສົມທຽບ ແລະມອບຈິດໃຈໃຫ້ພຣະປະສົງຂອງພຣະອົງສຳລັບຊີວິດເຮົາ.

ບໍ່ວ່າ ສາຍຕາຜູ້ອື່ນອາດມອງເຫັນເຮົາຢ່າງໃດກໍຕາມ ຫຼືເຮົາເຫັນຕົວເຮົາເອງຢ່າງໃດກໍແລ້ວແຕ່ ພຣະເຈົ້າຍັງຈະສືບຕໍ່ປັ້ນແຕ່ງເຮົາ ແລະຈັດຕຽມເຮົາເພື່ອພຣະປະສົງ ແລະເພື່ອພຣະກຽດຂອງພຣະອົງຕໍ່ໄປ. ບໍ່ສຳຄັນວ່າເຮົາຈະເປັນໃຜ ຫຼືເຮົາໄດ້ເຮັດຫຍັງມາກ່ອນ, ພວກເຮົາສາມາດນຳກຽດມາສູ່ພຣະເຈົ້າໂດຍທາງພຣະຄຣິດ. ພວກເຮົາຖືກສ້າງເພື່ອພຣະປະສົງນຶ່ງ.

| |
|---|
| *ພຣະເຈົ້າໄດ້ຈັດຕຽມທ່ານຢ່າງໃດເພື່ອບັນລຸຈຸດປະສົງຂອງທ່ານ?* |

## ນຳໃຊ້ໃນຊີວິດ

ທ່ານຈະຕອບສນອງຢ່າງໃດຕໍ່ຄວາມຈິງທີ່ພຣະເຈົ້າໃຫ້ຄຸນຄ່າທ່ານ ແລະໄດ້ຊົງສ້າງທ່ານເພື່ອຈຸດປະສົງນຶ່ງ? ຈົ່ງພິຈາຣະນາຄຳແນະນຳຕໍ່ລົງໄປນີ້:

- **ທ່ອງສຸພາສິດ 3:5-6.** ຈົ່ງຂຽນສຸພາສິດ 3:5-6 ໃສ່ແຜ່ນເຈັ້ຍບ່ອນທີ່ທ່ານສາມາດແນມເຫັນເລື້ອຍໆ. ທຸກຄັ້ງທີ່ທ່ານອ່ານ, ໃຫ້ອ້ອນວອນຂໍພຣະເຈົ້າເປີດເຜີຍເສັ້ນທາງ ແລະພຣະປະສົງຂອງພຣະອົງສຳລັບທ່ານໃຫ້ແຈ່ມແຈ້ງຂຶ້ນ.
- **ທູນຂໍການຊີ້ນຳຂອງພຣະເຈົ້າ.** ອະທິຖານ ແລະຂໍໃຫ້ພຣະເຈົ້າສຳແດງສິ່ງສະເພາະ ທີ່ພຣະອົງຢາກໃຫ້ທ່ານເຮັດ. ອາດເປັນສິ່ງງ່າຍໆເຊັ່ນວ່າ ການເຊີນເພື່ອນບ້ານມາໂບດ ຫຼືມາຮ່ວມສຶກສາພຣະຄັມພີນຳກຸ່ມທ່ານ. ແລະຫາໂອກາດປະຕິບັດຕາມ.
- **ຢືນຢັດເພື່ອຄົນອື່ນ.** ຊອກຄົນອື່ນໃນຊຸມຊົນຂອງທ່ານ ຄົນຍັງບໍ່ທັນບັງເກີດ, ຜູ້ສູງອາຍຸ, ຄົນທີ່ສູ້ທົນຕໍ່ສະພາບທາງດ້ານສຸຂພາບ ແລະດ້ານສມອງ ແລະເຮັດຢ່າງໃດຢ່າງນຶ່ງເພື່ອຮັບປະກັນວ່າ ພວກເຂົາບໍ່ຖືກມອງວ່າດ້ອຍຄ່າກວ່າສັງຄົມ. ຊ່ອຍເຂົາສແວງຫາຈຸດປະສົງຂອງເຂົາ ແລະຄຸນຄ່າໃນພຣະຄຣິດ.

ບໍ່ມີຫ້ອງສຳລັບກຽດຊັງ ຫຼືຈຳແນກໃນເສັ້ນທາງຕິດຕາມພຣະເຈົ້າຂອງເຮົາ ແລະການເຮັດໃຫ້ບັນລຸເປົ້າໝາຍຂອງເຮົາໃນອານາຈັກຂອງພຣະອົງ. ຍິ່ງທ່ານສຳນຶກໃນຄຸນຄ່າຂອງທ່ານໃນພຣະຄຣິດຫລາຍເທົ່າໃດ, ທ່ານກໍຍິ່ງສາມາດຍົກຊູຄຸນຄ່າຂອງຄົນອື່ນໃຫ້ສູງຂຶ້ນໄດ້ຫຼາຍເທົ່ານັ້ນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**